ແຜນງານບີຄວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

## Basic Education Quality and Access in Lao PDR






# New Teacher Development Video: Building confidence to teach English

## Media Report
## (22 September to 02 November 2023)

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ, ຕາງໜ້າໃຫ້ລັດຖະບານອົດສະຕຣາລີ ແລະ ອົງການ USAID
Basic Education Quality and Access in Lao PDR is managed by Tetra Tech International Development, on behalf of the Australian Government and the United States Agency for International Development (USAID).

# New Teacher Development Video: Building confidence to teach English

## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2023-09-26 | Newspaper | Army Newspaper | Page 6 |
| 2023-09-27 | Newspaper | Pathet Lao | Front and Page 4 |
| 2023-10-02 | Newspaper | Economic and Commerce | Page 3 |
| 2023-10-27 | Newspaper | Vientiane Mai | Page 2 |
| 2023-09-22 | Social Media | Teacher Development Videos YouTube channel | 20.4K subscribers |
| 2023-09-22 | Social Media | Vientiane Mai Facebook | 58K Followers |
| 2023-09-22 | Social Media | Edu-Sport Daily News Facebook | 7.1K Followers |
| 2023-09-22 | Social Media | Edu-Sport Daily News Facebook | 7.1K Followers |
| 2023-09-22 | Social Media | Lao National Radio Facebook | 149K Followers |
| 2023-09-25 | Social Media | VTE 9 Facebook | 6.2K Followers |
| 2023-09-26 | Social Media | Edu-Sport TV online Facebook | 64K Followers |
| 2023-09-26 | Social Media | Pathed Lao Facebook | 375K Followers |
| 2023-09-26 | Social Media | Education Development of Laos Facebook | 36K Members |
| 2023-10-08 | Social Media | Lao National Television English Program Facebook | 59K Followers |
| 2023-11-02 | Social Media | Tetra Tech International Development Facebook | 34K Followers |
| 2023-11-02 | Social Media | Tetra Tech International Development LinkedIn | 57K Followers |
| 2023-09-25 | Website | KPL English Website | Read article here |
| 2023-09-26 | Website | BEQUAL Website | Read article here |
| Since 2023-09-22 | TV | ESTV | |
| 2023-09-25 | TV | Lao National Television English Program | Watch the news in Lao here |
| 2023-10-08 | TV | VTE 9 Channel | Watch the news in Lao here |
| 2023-09-27 | Radio | Public Security Radio FM 101.5 | |
| 2023-09-27 | Radio | Army Radio FM 99.7 | |
| 2023-09-27 | Radio | Vientiane Radio FM 105.5 | |
| 2023-09-27 | Radio | Lao National Radio FM 103.7 | |
| 2023-09-27 | Radio | Lao Youth Radio FM 90.00 MHZ | |
| 2023-09-30 | Radio | Education Radio FM 103.7 MHZ | |

| | | | |
|---|---|---|---|
| 2023-10-02 | WhatsApp | MT-PT WhatsApp and FB groups | 19 groups with trainers<br>+/- 660 members |
| 2023-10-02 | WhatsApp | PESS-DESB | 18 Provincial groups<br>452 members |
| 2023-10-02 | WhatsApp | ETSP | 3 groups with ethnic teachers<br>98 members |
| 2023-10-02 | WhatsApp | Pre-Service Writing team | 8 TTCs and 2 universities<br>72 members |
| 2023-10-02 | WhatsApp | Target DESB | Teacher Dev Units in 30 target districts<br>64 members |
| 2023-10-02 | WhatsApp | Target TTC | Key coordinators from the 3 target TTCs<br>17 members |

# Pictures of articles in the media

| | | | |
|---|---|---|---|
| 2023-09-18 | Newspaper | Army Newspaper | Page 6 |



ກະຊວງສຶກສາທິການ ແລະ ກິລາ ຊຸກຍູ້ຄູສອນຊັ້ນປະຖົມ ເພື່ອສ້າງຄວາມເຊື່ອໝັ້ນໃນການຮຽນ-ການສອນພາສາອັງກິດ

| | | | |
|---|---|---|---|
| 2023-09-27 | Newspaper | Pathed Lao | Front and Page 4 |



ສ້າງຄວາມໝັ້ນໃຈໃນການຮຽນ-ການສອນພາສາອັງກິດຊັ້ນປະຖົມ



| 2023-09-18 | Newspaper | Economic and Commerce | Page 3 |
|---|---|---|---|


ເສດຖະກິດການຄ້າ 02.10.2023 ສຶກສາ/ຄຳຄົມ - ພາສາລາວ B3

ສສກ ແນະນຳ 7 ວິທີການສ້າງຄວາມໝັ້ນໃຈໃຫ້ຄູສອນພາສາອັງກິດຊັ້ນປະຖົມ

| 2023-10-27 | Newspaper | Vientiane Mai | Page 2 |
|---|---|---|---|


ສຶກສາ

ພັດທະນາທັກສະ ການຮຽນ-ການສອນ ພາສາອັງກິດໃນຊັ້ນປະຖົມສຶກສາ

● ກະຊວງສຶກສາທິການ ແລະ ກິລາ (ສສກ) ໂດຍການສະໜັບສະໜູນຈາກລັດຖະບານ ອົດສະຕຣາລີ ໄດ້ໃຫ້ການຊ່ວຍເຫຼືອຄູສອນ ຊັ້ນປະຖົມສຶກສາ ເພື່ອສ້າງຄວາມເຊື່ອໝັ້ນ ໃນ ການຮຽນ-ການສອນ ພາສາອັງກິດ ດ້ວຍ ການແນະນຳວິດີໂອສຳລັບການພັດທະນາຄູ ...

| 2023-09-22 | Vientiane Mai Facebook |
| --- | --- |

Vientiane Mai
11 mins ·

ວິດີໂອສຳລັບການພັດທະນາຄູການເສີມສ້າງຄວາມໝັ້ນໃຈໃນການສອນພາສາອັງກິດ

.............................................................

ພາສາອັງກິດເປັນວິຊາໜຶ່ງຂອງຫຼັກສູດປະຖົມສຶກສາ ແລະ ເປັນວິຊາທີ່ຈະໄດ້ສອນໂດຍຄູທຸກຄົນນັບແຕ່ຊັ້ນ ປ3 ແຕ່ການສອນພາສາຕ່າງປະເທດຍັງຄົງພົບຂໍ້ຫຍຸ້ງຍາກໂດຍຄູຫຼາຍຄົນ ໂດຍສະເພາະຖ້າພວກເຂົາບໍ່ໝັ້ນໃຈກັບລະດັບພາສາອັງກິດຂອງຕົນເອງ.
ໃນວິດີໂອສຳລັບການພັດທະນາຄູຕອນໃໝ່ນີ້ ຄູສາມາດເບິ່ງເພື່ອຮຽນຮູ້ 7 ວິທີການ ທີ່ແຕກຕ່າງກັນ ແລະ ຕົວຢ່າງຕົວຈິງກ່ຽວກັບວິທີທີ່ເຂົາເຈົ້າສາມາດປັບປຸງພາສາອັງກິດ ແລະ ສ້າງຄວາມໝັ້ນໃຈໃນການສອນພາສາອັງກິດ.
ວິດີໂອດັ່ງກ່າວແມ່ນໄດ້ແປພາສາມື ເພື່ອໃຫ້ເຂົ້າເຖິງໄດ້ທຸກຄົນ.

ລິ້ງເພື່ອກົດຮັບຊົມວິດີໂອ: https://www.youtube.com/watch?v=F0hopPiXLWY
#VientianeMai
#bm



| 2023-09-22 | Edu, Science-Sport Online Facebook |
| --- | --- |

ໜັງສືພິມສຶກສາ-ກິລາອອນລາຍ
2h ·

ວິດີໂອການພັດທະນາຄູ-ການເສີມສ້າງຄວາມໝັ້ນໃຈໃນການສອນພາສາອັງກິດຕອນໃໝ່ ຮຽນຮູ້ໄດ້ 7 ວິທີການ

------------------------------------------------------------------------

ພາສາອັງກິດເປັນວິຊາໜຶ່ງຂອງຫຼັກສູດປະຖົມສຶກສາ ແລະ ເປັນວິຊາທີ່ຈະໄດ້ສອນໂດຍຄູທຸກທ່ານນັບແຕ່ຊັ້ນ ປ.3 ແຕ່ການສອນພາສາຕ່າງປະເທດຍັງຄົງພົບຂໍ້ຫຍຸ້ງຍາກໂດຍຄູຫຼາຍທ່ານ ໂດຍສະເພາະຖ້າພວກເຂົາບໍ່ໝັ້ນໃຈກັບລະດັບພາສາອັງກິດຂອງຕົນເອງ.

ໃນວິດີໂອສຳລັບການພັດທະນາຄູຕອນໃໝ່ນີ້, ຄູສາມາດເບິ່ງເພື່ອຮຽນຮູ້ 7 ວິທີການທີ່ແຕກຕ່າງກັນ ແລະ...
See more



YOUTUBE.COM
**ວິດີໂອທີ 22 - ການເສີມສ້າງຄວາມໝັ້ນໃຈໃນການສອນພາສາອັງກິດ**
ວິດີໂອການຮຽນຮູ້ດ້ວຍຕົນເອງວິທີການເສີມສ້າງຄວາມໝັ້ນໃຈໃນການສອນພາສາອັງກິດທ່ານສາມາດດາວໂຫລດວິດີໂອ...

| 2023-09-15 | Edu, Science-Sport Online Facebook |
| --- | --- |

ໜັງສືພິມສຶກສາ-ກິລາລາຍວັນ
1h ·

ອອກອາກາດແລ້ວ ວິດີໂອຊ່ວຍປັບປຸງທັກສະພາສາອັງກິດຄູຕອນໃໝ່ ສະເໜີ 7 ວິທີແຕກຕ່າງກັນ

---------------------------------------------------------------------------

ກະຊວງສຶກສາທິການ ແລະ ກິລາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໄດ້ອອກວິດີໂອສຳລັບການພັດທະນາຄູຕອນໃໝ່ ກ່ຽວກັບ 7 ວິທີການ ເພື່ອສ້າງຄວາມເຊື່ອໝັ້ນໃນການສອນພາສາອັງກິດ. ວິດີໂອແມ່ນຜະລິດໂດຍທີມງານຂະແໜງສື່ອີເລັກໂຕຣນິກ ແລະ ການສຶກສາທາງໄກ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ).

ພາສາອັງກິດແມ່ນພາສາສາກົນ ທີ່ນຳ... See more



| 2023-09-22 | Lao National Radio Facebook |
| --- | --- |

Lao National Radio
September 22 at 2:32 PM ·

ກະຊວງສຶກສາທິການ ແລະ ກິລາ, ໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໃນການຊ່ວຍຄູສອນຊັ້ນປະຖົມເພື່ອສ້າງຄວາມເຊື່ອໝັ້ນໃນການຮຽນການສອນພາສາອັງກິດ.

ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໄດ້ອອກວິດີໂອສຳລັບການພັດທະນາຄູຕອນໃໝ່ ກ່ຽວກັບ 7 ວິທີການ ເພື່ອສ້າງຄວາມເຊື່ອໝັ້ນໃນການສອນພາສາອັງກິດ. ວິດີໂອແມ່ນຜະລິດໂດຍທີມງານຂະແໜງສື່ອີເລັກໂຕຣນິກ ແລະ ການສຶກສາທາງໄກ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ).
ພາສາອັງກິດແມ່ນພາສາ ສາກົນ ທີ່ນຳໃຊ້ເພື່ອສື່ສານລະຫວ່າງບັນດາປະເທດໃນໂລກ ແລະ ກໍຍັງຖືກນຳໃຊ້ເປັນພາສາຫຼັກເພື່ອດຳເນີນການປະຕິບັດງານຂອງ ບັນດາອຸປະກອນເພື່ອການສື່ສານທີ່ທັນສະໄໝເຊັ່ນ: ຄອມພິວເຕີ, ໂທລະສັບມືຖື, ຊັອບແວ ແລະ ອື່ນໆ. ສະນັ້ນ, ເພື່ອໃຫ້ສາມາດເຂົ້າເຖິງ ແລະ ມີສ່ວນຮ່ວມໃນສັງຄົມປະຈຸບັນ,ນັກຮຽນຈຳເປັນຕ້ອງໄດ້ພັດທະນາທັກສະດ້ານພາສາອັງກິດຂອງຕົນຜ່ານການ ເວົ້າ, ຟັງ, ອ່ານ ແລະ ຂຽນ. ຫາກສາມາດເຂົ້າໃຈພາສາອັງກິດລະດັບພື້ນຖານແລ້ວ, ນັກຮຽນຈະມີໂອກາດໃນຫຼາຍໆດ້ານໃນອະນາຄົດ. ດ້ວຍເຫດຜົນນັ້ນ, ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ມີຫຼັກສູດສຳລັບຊັ້ນປະຖົມສຶກສາ ທີ່ເລີ່ມຕົ້ນຮຽນພາສາອັງກິດນັບແຕ່ຊັ້ນ ປ.3.

ທ່ານ ຄຳຈັນ ວັດທະນອດ, ຮອງຜູ້ອຳນວຍການ ສວສ ໄດ້ກ່າວວ່າ: "ພາສາອັງກິດເປັນສ່ວນໜຶ່ງຂອງຫຼັກສູດປະຖົມສຶກສາ ແລະ ຄູທຸກຄົນຕ້ອງໄດ້ສອນ. ແຕ່ການສອນພາສາຕ່າງປະເທດຍັງເປັນສິ່ງທ້າທາຍສຳລັບຄູ, ໂດຍສະເພາະຖ້າພວກເຂົາບໍ່ໝັ້ນໃຈດ້ານພາສາອັງກິດຂອງຕົນເອງ. ຈຸດປະສົງຂອງວິດີໂອສຳລັບການພັດທະນາຄູຕອນໃໝ່ນີ້ ແມ່ນເພື່ອໃຫ້ຄູສອນຊັ້ນປະຖົມ ໄດ້ຮູ້ຄຳແນະນຳ ແລະ ເຫັນຕົວຢ່າງຕົວຈິງ ກ່ຽວກັບວິທີທີ່ພວກເຂົາສາມາດພັດທະນາທັກສະພາສາອັງກິດຂອງພວກເຂົາ ແລະ ມີຄວາມໝັ້ນໃຈໃນການສອນພາສາອັງກິດ."
ວິດີໂອນີ້ຖ່າຍທຳຢູ່ໃນຫ້ອງຮຽນຕົວຈິງທີ່ແຂວງຫຼວງນ້ຳທາ ໄດ້ອະທິບາຍ 7 ວິທີແຕກຕ່າງກັນ ທີ່ຄູອາຈານສາມາດນຳໃຊ້ເພື່ອສ້າງຄວາມໝັ້ນໃຈໃນການສອນພາສາອັງກິດ. ແຕ່ລະວິທີ ແມ່ນສະແດງໃຫ້ເຫັນໂດຍການດຳເນີນການສອນຕົວຈິງຂອງຄູ, ຄູຝຶກ ແລະ ນັກຮຽນທີ່ເປັນອາສາສະໝັກຮ່ວມໃນການຖ່າຍທຳວິດີໂອນີ້. ເຕັກນິກທີ່ສະແດງໃຫ້ເຫັນແມ່ນງ່າຍ ແລະ ຈະຊ່ວຍໃຫ້ຄູສ້າງຄວາມໝັ້ນໃຈໄດ້ໄວ: ການຮຽນຮູ້ຄຳສັ່ງພື້ນຖານໃນຫ້ອງຮຽນ, ການຝຶກຊ້ອມບົດຮຽນເປັນຄູ່ກັບເພື່ອນຮ່ວມງານ, ການຄົ້ນຄວ້າດ້ວຍຕົນເອງ, ວິທີການນຳໃຊ້ວັດຈະນານຸກົມອອນລາຍ ແລະ ວິທີການຂໍຄວາມຊ່ວຍເຫຼືອໄດ້ໄວຈາກຄູຝຶກ.
ວິດີໂອນີ້ ແມ່ນໄດ້ອອກອາກາດທາງ ຊ່ອງ ໂທລະພາບການສຶກສາ ແລະ ກິລາ (Lao ESTV) ຊ່ອງ 8 ທາງດາວທຽມລາວແຊັດ, ແພັດຟອມຄັງປັນຍາລາວ ແລະ ທາງຊ່ອງ YouTube: ວິດີໂອສຳລັບການພັດທະນາຄູ Teacher Development Videos.
ເພື່ອສະໜັບສະໜູນຄູສອນຊັ້ນປະຖົມຕື່ມອີກ, ຫຼັກສູດພາສາອັງກິດສະບັບປັບປຸງໃໝ່ສຳລັບຊັ້ນຮຽນ ປ. 3 ຫາ ປ.5 ທີ່ພັດທະນາໂດຍ ສວສ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໄດ້ຖືກອອກແບບເພື່ອເຮັດໃຫ້ການຮຽນ-/ການສອນພາສາອັງກິດງ່າຍຂຶ້ນສຳລັບຄູ ແລະ ນັກຮຽນ. ຫົວຂໍ້ ແລະ ສັບພາສາທີ່ມີຢູ່ໃນບົດຮຽນແມ່ນກ່ຽວຂ້ອງກັບຊີວິດປະຈຳວັນຂອງນັກຮຽນ. ຕົວຢ່າງ, ເວົ້າກ່ຽວກັບຄອບຄົວ, ອາຫານ ແລະ ກິດຈະກຳຍາມຫວ່າງ. ຫຼັກສູດພາສາອັງກິດຍັງລວມມີ ຟາຍສຽງທີ່ໃຫ້ຄູນຳໃຊ້ໃນການສອນ ທີ່ມີຢູ່ໃນ USB ທີ່ໄດ້ແຈກຢາຍໃຫ້ ແລະ ຍັງອັບໂຫຼດລົງໃນຊ່ອງ YouTube ວິດີໂອສຳລັບການພັດທະນາຄູ Teacher Development Videos. ຄູສາມາດນຳໃຊ້ຟາຍສຽງດັ່ງກ່າວເພື່ອຮຽນຮູ້ ແລະ ພັດທະນາພາສາອັງກິດຂອງຕົນເອງ ລວມທັງການນຳໃຊ້ສອນນັກຮຽນໃນຫ້ອງຮຽນ.

ດ້ວຍຍອດວິວຫຼາຍກວ່າ 3 ລ້ານວິວ, ທາງຊ່ອງ YouTube ວິດີໂອສຳລັບການພັດທະນາຄູ (Teacher Development Videos) ທີ່ໄດ້ສ້າງຂຶ້ນນັບແຕ່ ປີ 2019 ໂດຍກະຊວງສຶກສາທິການ ແລະ ກິລາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ ຖືວ່າເປັນຊ່ອງຢູທູບທີ່ປະສົບຜົນສຳເລັດ. ຊ່ອງຢູທູບດັ່ງກ່າວ ປະກອບມີວິດີໂອການສອນສຳລັບການຝຶກການຮຽນການສອນ ແລະ ຟາຍສຽງ ເພື່ອໃຫ້ຄູສອນຊັ້ນປະຖົມ, ຄູຝຶກ ແລະ ພະນັກງານຜູ້ເຮັດວຽກສຶກສານິເທດພາຍໃນ ໄດ້ນຳໃຊ້. ບັນດາວິດີໂອປະກອບມີຫຼາຍວິຊາທີ່ກ່ຽວຂ້ອງກັບຫຼັກສູດໃໝ່ ແລະ ວິທີການຮຽນແບບໃໝ່ ທີ່ເນັ້ນການປະຕິບັດຕົວຈິງ. ຄູໄດ້ນຳໃຊ້ເພື່ອກະກຽມບົດຮຽນ, ປັບປຸງວິທີການສິດສອນຂອງເຂົາເຈົ້າ ພ້ອມທັງຮຽນຮູ້ ຫຼື ທົບທວນ ເຕັກນິກສະເພາະໃດໜຶ່ງ. ພວກເຂົາເຈົ້າຍັງໄດ້ເປີດຄຳບັນ, ເພງ ແລະ ເລື່ອງເປັນພາສາອັງກິດ ໃຫ້ນັກຮຽນໃນຫ້ອງຮຽນຟັງ.
ລິ້ງເພື່ອຕິດຕາມຊົມວິດີໂອ: https://www.youtube.com/watch?v=F0hopPiXLWY



| 2023-09-25 | VTE 9 Facebook and TV |
|---|---|




| 2023-09-26 | Edu-Sport TV online Facebook |
|---|---|



| 2023-09-26 | Pathed Lao Facebook |
|---|---|

ປະເທດລາວ Pathedlao
September 26 at 2:15 PM ·

ສ້າງຄວາມໝັ້ນໃຈ ໃນການຮຽນ-ການສອນພາສາອັງກິດ ຊັ້ນປະຖົມ

ສປຊ. ເມື່ອບໍ່ດົນມານີ້, ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ໂດຍໄດ້ຮັບການສະໜັບສະໜູນຈາກ ອົງການບຣິດທິສເຄົາຊິວ ໄດ້ສ້າງວິດີໂອ ສຳລັບການພັດທະນາຄູສອນໃໝ່ ກ່ຽວກັບ 7 ວິທີການ ເພື່ອສ້າງຄວາມເຊື່ອໝັ້ນ ໃນການສອນພາສາອັງກິດ ເຊິ່ງວິດີໂອດັ່ງກ່າວ ຜະລິດໂດຍທີມງານສະເພາະສື່ອະເລັກໂຕຣນິກ ແລະ ການສຶກສາທາງໄກ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ).

ທ່ານ ຄຳຈັນ ວັດທະພອດ ຮອງຜູ້ອຳນວຍການ ສວສ ໄດ້ກ່າວວ່າ: ພາສາອັງກິດ ເປັນສ່ວນໜຶ່ງຂອງຫຼັກສູດປະຖົມສຶກສາ ແລະ ຄູທຸກຄົນຕ້ອງໄດ້ສອນ, ແຕ່ການສອນພາສາຕ່າງປະເທດຍັງເປັນສິ່ງທ້າທາຍສຳລັບຄູ ໂດຍສະເພາະຄວາມບໍ່ໝັ້ນໃຈ ດ້ານພາສາອັງກິດຂອງຕົນເອງ. ຈຸດປະສົງຂອງວິດີໂອສຳລັບການພັດທະນາຄູສອນໃໝ່ນີ້ ເພື່ອໃຫ້ຄູສອນຊັ້ນປະຖົມ ໄດ້ຮູ້ ຄຳແນະນຳ ແລະ ເຫັນຕົວຢ່າງ ກ່ຽວກັບວິທີທີ່ພວກເຂົາ ສາມາດພັດທະນາທັກສະພາສາອັງກິດ ແລະ ມີຄວາມໝັ້ນໃຈໃນ ການສອນພາສາອັງກິດຫຼາຍຂຶ້ນ.

ພາສາອັງກິດ ແມ່ນພາສາສາກົນ ທີ່ນຳໃຊ້ເພື່ອສື່ສານລະຫວ່າງບັນດາປະເທດໃນໂລກ ແລະ ຖືກນຳໃຊ້ເປັນພາສາຫຼັກ ເພື່ອດຳເນີນການປະຕິບັດງານ ຂອງບັນດາອຸປະກອນ ເພື່ອການສື່ສານທີ່ທັນສະໄໝເຊັ່ນ: ຄອມພິວເຕີ, ໂທລະສັບມືຖື, ຊອບແວ ແລະ ອື່ນໆ. ສະນັ້ນ, ເພື່ອໃຫ້ສາມາດເຂົ້າເຖິງ ແລະ ມີສ່ວນຮ່ວມໃນສັງຄົມປັດຈຸບັນ, ນັກຮຽນຈຳເປັນຕ້ອງໄດ້ ພັດທະນາທັກສະ ດ້ານພາສາອັງກິດຂອງຕົນຜ່ານການເວົ້າ, ຟັງ, ອ່ານ ແລະ ຂຽນ, ຖ້າເລີ່ມໃຊ້ພາສາອັງກິດລະດັບພື້ນຖານ ແລ້ວ, ນັກຮຽນຈະມີໂອກາດໃນຫຼາຍດ້ານໃນອະນາຄົດ. ດັ່ງນັ້ນ, ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ມີຫຼັກສູດ ສຳລັບຊັ້ນປະຖົມສຶກສາ ທີ່ເລີ່ມຕົ້ນຮຽນພາສາອັງກິດນັບແຕ່ຊັ້ນ ປ3.

ວິດີໂອນີ້, ຖ່າຍທຳຢູ່ໃນຫ້ອງຮຽນຕົວຈິງ ທີ່ແຂວງຫຼວງນ້ຳທາ ໄດ້ອະທິບາຍ 7 ວິທີແຕກຕ່າງກັນ ທີ່ຄູອາຈານສາມາດນຳໃຊ້ ເພື່ອສ້າງຄວາມໝັ້ນໃຈໃນການສອນພາສາອັງກິດ, ເຊິ່ງແຕ່ລະວິທີ ແມ່ນສະແດງໃຫ້ເຫັນໂດຍການດຳເນີນການສອນ ຕົວຈິງຂອງຄູ, ຄູຝຶກ ແລະ ນັກຮຽນທີ່ເປັນອາສາສະໝັກຮ່ວມໃນການຖ່າຍທຳວິດີໂອນີ້.

ວິດີໂອນີ້, ໄດ້ອອກອາກາດທາງ ຊ່ອງໂທລະພາບການສຶກສາ ແລະ ກິລາ (Lao ESTV) ຊ່ອງ 8 ທາງດາວທຽມລາວແຊັດ, ແພລັດຟອມຄັງປັນຍາລາວ ແລະ ທາງຊ່ອງ YouTube: ວິດີໂອສຳລັບການພັດທະນາຄູTeacher Development Videos. ລິ້ງເພື່ອກົດຮັບຊົມວິດີໂອ: https://www.youtube.com/watch?v=F0hopPiXLWY



| 2023-09-26 | Education Development of Laos Facebook |
|---|---|

Xayapheth Chaphichith
Admin · Top contributor · September 26 at 5:14 PM ·

Please share this for your teachers in all schools.



YOUTUBE.COM
**ວິດີໂອທີ 22 - ການເສີມສ້າງຄວາມໝັ້ນໃຈໃນການສອນພາສາອັງກິດ**
ວິດີໂອການຮຽນຮູ້ເຕັກນິກວິທີການເສີມສ້າງຄວາມໝັ້ນໃຈໃນການສອນພາສາອັງກິດທ່ານສາມາດດາວໂຫລດວິດີໂອ...

## 2023-10-08 Lao National Television English Program Facebook and TV




## 2023-11-02 Tetra Tech International Development Facebook and LinkedIn






